ຫລັກແຫ່ງຄວາມເຊື່ອ ຂອງ

ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ

ພວກເຮົາ ເຊື່ອໃນ ພຣະເຈົ້າ, ພຣະບິດາຜູ້ສະຖິດນິລັນດອນ, ແລະ ໃນ ພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ, ແລະ ໃນ ພຣະວິນຍານບໍລິສຸດ.

2 ພວກເຮົາເຊື່ອວ່າ ມະນຸດຈະໄດ້ຮັບໂທດເພາະບາບ ຂອງຕົນ ແລະ ບໍ່ແມ່ນເພາະການລ່ວງລະເມີດ ຂອງອາດາມ.

3 ພວກເຮົາເຊື່ອວ່າ ຜ່ານທາງ ການຊົດໃຊ້ຂອງພຣະຄຣິດ ມະນຸດ ຊາດທັງປວງຈະ ລອດໄດ້ ໂດຍ ການປະຕິບັດຕາມ ກົດ ແລະ ພິທີການ ແຫ່ງ ພຣະກິດຕິຄຸນ.

4 ພວກເຮົາເຊື່ອວ່າ ຫລັກທຳ ແລະ ພິທີການເບື້ອງຕົ້ນແຫ່ງພຣະ ກິດຕິຄຸນຄື: ໜຶ່ງ ສັດທາໃນອົງພຣະເຢຊູຄຣິດເຈົ້າ; ສອງ ການກັບ ໃຈ; ສາມ ບັບຕິສະມາໂດຍ ການລົງໄປໃນນ້ຳໝົດທັງຕົວເພື່ອການປົດ ບາບ; ສີ່ ການວາງ ມືເພື່ອຮັບ ຂອງປະທານແຫ່ງພຣະວິນຍານບໍລິສຸດ.

5 ພວກເຮົາເຊື່ອວ່າ ມະນຸດຕ້ອງໄດ້ຮັບ ການເອີ້ນຈາກພຣະເຈົ້າໂດຍ ການພະຍາກອນ ແລະ ໂດຍ ການວາງມືໂດຍຜູ້ມີ ສິດອຳນາດ ເພື່ອໃຫ້ ສັ່ງສອນພຣະກິດຕິຄຸນ ແລະ ປະຕິບັດ ພິທີການຕາມນັ້ນ.

6 ພວກເຮົາເຊື່ອໃນ ການຈັດວາງລະບຽບວາງຢ່າງດຽວກັນກັບທີ່ມີ ຢູ່ໃນສາດສະໜາຈັກສະໄໝບູຮານ ນັ້ນຄື ອັກຄະສາວົກ, ສາດສະດາ, ສິດຍາພິບານ, ຄູສອນ, ຜູ້ປະກາດຂ່າວປະເສີດ, ແລະ ອື່ນໆ.

7 ພວກເຮົາເຊື່ອໃນ ຂອງປະທານແຫ່ງ ການເວົ້າພາສາ, ການພະ ຍາກອນ, ການເປີດເຜີຍ, ພາບທີ່ມາໃຫ້ເຫັນ, ການປິ່ນປົວ, ການແປ ພາສາ, ແລະ ອື່ນໆ.

8 ພວກເຮົາເຊື່ອວ່າ ພຣະຄຣິສຕະທຳຄຳພີເປັນ ພຣະຄຳຂອງພຣະ ເຈົ້າຕາບໃດທີ່ແປມັນ ຖືກຕ້ອງ. ພວກເຮົາເຊື່ອອີກວ່າ ພຣະຄຳພີມໍ ມອນເປັນພຣະຄຳຂອງພຣະເຈົ້າ.

9 ພວກເຮົາເຊື່ອທັງໝົດທີ່ພຣະເຈົ້າໄດ້ ເປີດເຜີຍມາ, ທັງໝົດທີ່ ພຣະອົງເປີດເຜີຍຢູ່ໃນຂະນະນີ້ ແລະ ພວກເຮົາເຊື່ອວ່າ ພຣະອົງຈະ ເປີດເຜີຍເລື່ອງສຳຄັນ ແລະ ຍິ່ງໃຫຍ່ອີກຫລາຍເລື່ອງກ່ຽວກັບອານາ ຈັກຂອງພຣະເຈົ້າ.

10 ພວກເຮົາເຊື່ອໃນ ການຮ່ວມກັນແທ້ໆຂອງເຊື້ອສາຍອິດສະຣາ ເອນ ແລະ ໃນການກັບຄືນມາຂອງຄົນ ສິບເຜົ່າ ແລະ ວ່າ ຊີໂອນ (ເຢຣູ ຊາເລັມໃໝ່) ຈະຖືກສ້າງຂຶ້ນໃນທະວີບອາເມຣິກາ ວ່າພຣະຄຣິດຈະ ປົກ ຄອງແຜ່ນດິນໂລກເອງ ແລະ ວ່າແຜ່ນດິນໂລກຈະຖືກ ເຮັດໃໝ່ ແລະ ໄດ້ຮັບ ລັດສະໝີພາບ ແຫ່ງສຸຂະເສີມຂອງມັນ.

11 ພວກເຮົາເຊື່ອຖື ສິດທິແຫ່ງການນະມັດສະການພຣະເຈົ້າ ຜູ້ມີ ລິດທານຸພາບຕາມ ການບອກຂອງ ຄວາມຮູ້ສຶກຜິດ ຫລື ຖືກຂອງເຮົາ ເອງ ແລະ ຍອມໃຫ້ຄົນທັງປວງມີສິດທິເຊັ່ນດຽວກັນ ໃຫ້ເຂົາ ນະມັດສະ ການຢ່າງໃດ, ທີ່ໃດ, ຫລື ສິ່ງໃດທີ່ເຂົາຈະນະມັດສະການ.

12 ພວກເຮົາເຊື່ອໃນການຂຶ້ນຢູ່ກັບກະສັດ, ປະທານາທິບໍດີ, ຜູ້ປົກ ຄອງ, ແລະ ຜູ້ພິພາກສາ ໃນການເຮັດຕາມການຍົກຍ້ອງ ແລະ ໃນການ ສະໜັບສະໜູນ ກົດໝາຍ.

13 ພວກເຮົາເຊື່ອໃນການເປັນຄົນ ຊື່ສັດ, ຈິງໃຈ, ບໍລິສຸດ, ມີເມດ ຕາ, ມີຄຸນນະທຳ, ແລະ ໃນ ການເຮັດຄວາມດີຕໍ່ມະນຸດທັງປວງ ໂດຍ ແທ້ແລ້ວ ພວກເຮົາຈະກ່າວວ່າ ພວກເຮົາດຳເນີນຕາມ ຄຳແນະນຳຂອງ ໂປໂລ—ນັ້ນຄື ພວກເຮົາເຊື່ອທຸກສິ່ງ, ພວກເຮົາ ຫວັງທຸກສິ່ງ, ພວກ ເຮົາອົດທົນມາແລ້ວຫລາຍສິ່ງ ແລະ ຫວັງທີ່ຈະສາມາດ ອົດທົນໄດ້ທຸກ ສິ່ງ ຫາກມີສິ່ງໃດທີ່ເປັນ ຄຸນນະທຳ, ງົດງາມ, ຫລື ຈາກການລາຍງານ ດີ ຫລື ຄວນສັນລະເສີນ, ພວກເຮົາສະແຫວງຫາສິ່ງເຫລົ່ານີ້.

ໂຈເຊັບ ສະມິດ.

Unofficial poster layout of the text published on churchofjesuschrist.org. Not an official publication of The Church of Jesus Christ of Latter-day Saints. Generated by Urim, urim.samuelbaird.com